ບົດກ່າວປາໄສ

ຂອງເລຂາທິການໃຫຍ່, ປະທານປະເທດ ຫງວຽນ ຟູ ຈ້ອງ

ໃນພິທີສະເຫຼີມສະຫຼອງວັນສ້າງຕັ້ງພັກກອມມູນິດ ຫວຽດນາມ ຄົບຮອບ 90 ປີ

*ຮຽນບັນດາແຂກທີ່ມີກຽດ,*

*ຮຽນບັນດາສະຫາຍ ແລະພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫຼາຍ,*

ໃນທ່າມກາງບັນຍາກາດທີ່ທົ່ວປະເທດກຳລັງມີຄວາມເບີກບານມ່ວນຊື່ນ ແລະ ພາກພູມໃຈຕໍ່ບັນດາຜົນສຳເລັດທີ່ມີຄວາມໝາຍສຳຄັນໃນປີ 2019 ແລະ ກຳລັງຕ້ອນຮັບປີໃໝ່ (ປີຊວດ) 2020, ມື້ນີ້, ທີ່ນະຄອນຫຼວງຮ່າໂນ້ຍ "ນະຄອນທີ່ປະຫວັດສາດດ້ານວັດທະນະທຳ ແລະ ນະຄອນວິລະຊົນ" ແລະ ເປັນ "ນະຄອນແຫ່ງສັນຕິພາບ", ພວກເຮົາໄດ້ຈັດຕັ້ງພິທີສະເຫຼີມສະຫຼອງວັນສ້າງຕັ້ງພັກກອມມູນິດ ຫວຽດນາມ ຄົບຮອບ 90 ປີ (03/2/1930-03/2/2020) ຢ່າງສະຫງ່າລາສີ.

ຕາງໜ້າຄະນະບໍລິຫານງານສູນກາງພັກ, ຂ້າພະເຈົ້າຂໍສະແດງຄວາມຍິນດີຮັບຕ້ອນ ແລະ ຝາກຄຳຢື້ຢາມຖາມຂ່າວ ແລະ ຄຳອວຍພອນໄຊອັນປະເສີດມາຍັງບັນດາສະຫາຍການນຳ, ອະດີດການນຳພັກ, ລັດ, ສູນກາງແນວໂຮມປະເທດຊາດຫວຽດນາມ, ບັນດານັກປະຕິວັດອາວຸໂສ, ບັນດາແມ່ວິລະຊົນຂອງ ຫວຽດນາມ, ບັດດາແຂກທີ່ມີກຽດ ແລະ ບັນດາສະຫາຍ, ພີ່ນ້ອງຮ່ວມຊາດນບຂອບເຂດທົ່ວປະເທດ, ຊາວຫວຽດນາມກຳລັງດຳລົງຊີວິດຢູ່ຕ່າງປະເທດ.

*ຮຽນບັນດາສະຫາຍ ແລະພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫຼາຍ,*

ປະຫວັດສາດພັນປີຂອງຊົນຊາດຫວຽດນາມໄດ້ສະແດງໃຫ້ເຫັນວ່າຄວາມຮັກຊາດ, ການປົກປັກຮັກສາປະເທດຊາດ ແລະ ການຕໍ່ສູ້ຕ້ານສັດຕູຜູ້ຮຸກຮານຢ່າງເດັດດ່ຽວເພື່ອປົກປັກຮັກສາເອກະລາດ, ອຳນາດອະທິປະໄຕ ແລະ ໂຮມປະເທດຊາດເປັນອັນໜຶ່ງອັນດຽວແມ່ນມູນເຊື້ອທີ່ມີຄຸນຄ່າທີ່ສຸດຂອງປະຊາຊົນຫວຽດນາມ.

ໂດຍສືບຕໍ່ມູນເຊື້ອດັ່ງກ່າວ, ນັບແຕ່ກາງສະຕະວັດທີ XIX, ໃນເມື່ອພວກລ່າເມືອງຂຶ້ນຝຣັ່ງຮຸກຮານປະເທດຫວຽດນາມ, ໂດຍບໍ່ຍອມຮັບຊາຕະກຳທີ່ເປັນຂ້າທາດ, ປະຊາຊົນຫວຽດນາມໄດ້ລຸກຮື້ຂຶ້ນຕໍ່ສູ້ຢ່າງຕໍ່ເນື່ອງ ຜ່ານບັນດາຂະບວນການຮັກຊາດທີ່ເຂັ້ມແຂງ ແລະ ລຽນຕິດດ້ວຍຫຼາຍທິດທາງ, ຮູບແບບທີ່ແຕກຕ່າງກັນ ນັບແຕ່ເສັ້ນທາງກູ້ຊາດຂອງບັນດານັກປັນຍາຊົນ ຈົນຮອດບັນດາຂະບວນການລຸກຮື້ຂຶ້ນຂອງຊາວນາ ແລະ ເສັ້ນທາງປະຕິວັດຂອງນາຍທຶນ...

ເຖິງແມ່ນວ່າໄດ້ດຳເນີນການຕໍ່ສູ້ຢ່າງອົງອາດກ້າຫານ ແລະ ຍອມເສຍສະຫຼະຢ່າງໃຫຍ່ຫຼວງກໍຕາມ, ແຕ່ຍ້ອນມີຄວາມຈຳກັດທາງດ້ານປະຫວັດສາດ ແລະຂາດແນວທາງຖືກຕ້ອງ, ບັນດາຂະບວນການດັ່ງກ່າວນັ້ນລ້ວນບໍ່ສາມາດຍາດໄດ້ສຳເລັດຜົນ, ປະຫວັດສາດຮຽກຮ້ອງໄດ້ຊອກຫາເສັ້ນທາງໃໝ່.

ປີ 1911, ຊາວໜຸ່ມຮັກຊາດຊື່ວ່າ ຫງວຽນ ເຕິດ ແທ່ງ (ນັ້ນແມ່ນລຸງໂຮ່ ທີ່ແສນເຄົາລົບຮັກຂອງພວກເຮົາ) ໄດ້ອອກໄປຊອກຫາເສັ້ນທາງໃໝ່ໃຫ້ແກ່ພາລະກິດກູ້ຊາດ, ຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ. ໂດຍມີຄວາມມຸ້ງມາດປາດຖະໜາ, ຄວາມມຸ້ງຫວັງອັນຍິ່ງໃຫຍ່, ເພິ່ນໄດ້ຖືເອົາລັດທິມາກ-ເລນິນ ແລະ ຊອກເຫັນເສັ້ນທາງກູ້ຊາດອັນຖືກຕ້ອງໃນລັດທິດັ່ງກ່າວ, ນັ້ນແມ່ນເສັ້ນທາງປະຕິວັດກຳມະຊີບ.

ພາຍຫຼັງເຄື່ອນໄຫວຢູ່ຕ່າງປະເທດຫຼາຍປີ, ເພິ່ນໄດ້ຕັ້ງໃຈຄົ້ນຄວ້າສຶກສາຮ່ຳຮຽນ, ໜູນໃຊ້ຢ່າງປະດິດສ້າງ ແລະ ເຜີຍແຜ່ລັດທິມາກ-ເລນິນ ກັບຄືນປະເທດ ຫວຽດນາມ, ອອກແຮງກະກຽມທຸກເງື່ອນໄຂທີ່ຈຳເປັນແກ່ການສ້າງຕັ້ງພັກປະຕິວັດທີ່ແທ້ຈິງ. ວັນທີ 03/2/1930, ກອງປະຊຸມເຕົ້າໂຮມເອົາບັນດາອົງການຈັດຕັ້ງກອມມູນິດເຂົ້າຮ່ວມກອງປະຊຸມຢູ່ແຫຼມກູລຸນທີ່ຮົງກົງ, ປະເທດຈີນໂດຍການເປັນປະທານຂອງເພິ່ນເອງ (ຜູ້ນຳຫງວຽນ ອາຍ ກວັກ), ເຊິ່ງໄດ້ຕັດສິນໃຈທ້ອນໂຮມບັນດາອົງການຈັດຕັ້ງກອມມູນິດຢູ່ໃນປະເທດຫວຽດນາມເຂົ້າພັກດຽວກັນໂດຍໃສ່ຊື່: ພັກກອມມູນິດ ຫວຽດນາມ. ນີ້ຖືວ່າເປັນຂີດໝາຍກ້າວກະໂດດທາງປະຫວັດສາດອັນຍິ່ງໃຫຍ່, ຢຸດຕິວິກິດການທີ່ແກ່ຍາວໃນດ້ານການຈັດຕັ້ງ ແລະ ແນວທາງປະຕິວັດຂອງຫວຽດນາມ.

ການທີ່ພັກກອມມູນິດຫວຽດນາມ ກຳເນີດຂຶ້ນແມ່ນໝາກຜົນຂອງການປະສານສົມທົບລະຫວ່າງລັດທິມາກ-ເລນິນ ກັບຂະບວນການກຳມະກອນແລະຂະບວນການຮັກຊາດ; ສະແດງໃຫ້ເຫັນຊົນຊັ້ນກຳມະກອນ ຫວຽດນາມ ໄດ້ເຕີບໃຫຍ່ຂຶ້ນ ແລະ ສາມາດແບກຫາບໂຊກຊະຕາກຳປະຫວັດສາດໃນການນຳພາການປະຕິວັດ.

ໂຄງການການເມືອງທຳອິດຂອງພັກ ທີ່ໄດ້ຖືກຮັບຮອງເອົາໃນກອງປະຊຸມສ້າງຕັ້ງພັກໄດ້ກຳນົດເສັ້ນທາງພື້ນຖານຂອງປະຕິວັດ ຫວຽດນາມ, ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະ ຈຳເປັນຂອງຊົນຊາດ ແລະ ຄວາມມຸ້ງມາດປາດຖະໜາຂອງປະຊາຊົນ.

ພາຍຫຼັງສ້າງຕັ້ງຂຶ້ນ, ມີຄວາມໃກ້ຊິດຕິດແທດແບບກາຍອິນຊີກັບປະຊາຊົນ, ໄດ້ຮັບຄວາມເຊື່ອໝັ້ນ ແລະ ສະໜັບສະໜູນຈາກປະຊາຊົນ, ພຽງແຕ່ 15 ປີ, ພັກກອມມູນິດຫວຽດນາມໄດ້ນຳພາການຕໍ່ສູ້ປົດປ່ອຍຊາດ, ດຳເນີນຂະບວນການປະຕິວັດສະແສ

ສູງສາມຂະບວນການເຊັ່ນ: ກະແສສູງປະຕິວັດ 1930-1931 ເຊິ່ງຊຸດຍອດແມ່ນຂະບວນການ ໂຊວຽດ-ເງ້ຕິ້ງ, ກະແສສູງການປະຕິວັດຮຽກຮ້ອງເອົາສະຫວັດດີການ, ປະຊາທິປະໄຕ (1936-1939) ແລະ ກະແສສູງການປະຕິວັດປົດປ່ອຍຊົນຊາດ (1939-1945). ຮອດປີ 1945, ໃນເມື່ອສະພາບການດ້ານປະຕິວັດສຸກຫງ່ອມແລ້ວ, ພັກກອມມູນິດ ຫວຽດນາມ ໄດ້ນຳພາປະຊາຊົນ ຫວຽດນາມ ທົ່ວທັງຊາດຍາດເອົາໄຊຊະນະໃນການປະຕິວັດເດືອນສິງຫາປີ 1945 ທີ່ "ຟ້າຮ້ອງດິນເຄື່ອນ", ສ້າງຕັ້ງຂຶ້ນປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໃນວັນທີ 02/9/1945 (ປີນີ້, ພວກເຮົາຈະສະເຫຼີມສະຫຼອງຄົບຮອບ 75 ປີ).

ພາຍຫຼັງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ສ້າງຕັ້ງຂຶ້ນ, ການປະຕິວັດໄດ້ປະເຊີນໜ້າກັບຄວາມຫຍຸ້ງຍາກ, ສິ່ງທ້າທາຍຫຼາຍປະການເຊິ່ງພ້ອມດຽວກັນຕ້ອງປະເຊີນໜ້າກັບ "ໄພອຶດຫິວ, ໄພກືກໜັງສື ແລະ ສັດຕູພາຍນອກ".

ໃນສະພາບການທີ່ອັດຕະຂັດດັ່ງກ່າວນັ້ນ, ພັກໄດ້ນຳພາປະຊາຊົນຫວຽດນາມຜ່ານຜ່າການຕົກຖານະເຂົ້າດ້າມເຂົ້າເຂັມ, ປົກປັກຮັກສາ ແລະ ສ້າງອຳນາດການປົກຄອງອັນໜຸ່ມນ້ອຍຢ່າງອົງອາດກ້າຫານ, ພ້ອມກັນນັ້ນຕັ້ງໜ້າໃນການກະກຽມທຸກສິ່ງທຸກຢ່າງເພື່ອຈະກ້າວເຂົ້າສູ່ການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຜູ້ຮຸກຮານ.

ບົນພື້ນຖານແນວທາງການຕໍ່ສູ້ທົ່ວປວງຊົນ, ຮອບດ້ານ, ຍືດເຍື້ອຍາວນານ ໂດຍອີງໃສ່ກຳລັງແຮງຂອງຕົນເອງເປັນຕົ້ນຕໍ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ, ຮັກຊາດຂອງທົ່ວປວງຊົນທັງຊາດ, ພັກໄດ້ນຳພາປະຊາຊົນຕີຖອຍທຸກໆກົນອຸບາຍ, ແຜນການຮຸກຮານຂອງສັດຕູ, ພິເສດແມ່ນໄຊຊະນະໃນບັ້ນຮົບຍຸດທະສາດລະດູໃບໄມ້ຫຼົ່ນ-ລະດູບານໃໝ່ ປີ 1953-1954, ເຊິ່ງຈຸດສູງສຸດແມ່ນໄຊຊະນະ ດ້ຽນ ບຽນ ຝູ "ມີຊື່ສຽງໂດ່ງດັງທົ່ວທະວີບ, ສັ່ນສະເທືອນທົ່ວໂລກ", ໄດ້ບັງຄັບພວກລ່າເມືອງຂຶ້ນຝຣັ່ງຕ້ອງຍອມເຊັນສັນຍາ ເຊີແນວ (ປີ 1954), ຢຸດຕິການສົງຄາມຮຸກຮານ ຫວຽດນາມ.

ແຕ່ປີ 1954 ເຖິງປີ 1975, ປະເທດຫວຽດນາມໄດ້ແບ່ງອອກເປັນສອງພາກ. ພາຍໃຕ້ການນຳພາຂອງພັກພາກເໜືອທັງໄດ້ພະຍາຍາມສ້າງສັງຄົມນິຍົມ, ທັງໄດ້ສຸມກຳລັງ ແຮງເພື່ອເຮັດສຳເລັດພັນທະຂອງແນວຫຼັງໃຫ້ແກ່ບັ້ນຮົບແນວໜ້າອັນໃຫຍ່. ປະຊາຊົນພາກໃຕ້ໄດ້ສືບຕໍ່ການຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ, ທ້ອນໂຮມປະເທດຊາດເປັນອັນໜຶ່ງອັນດຽວຢ່າງອົງອາດກ້າຫານ.

ດ້ວຍຈິດໃຈ "ຍອມເສຍສະຫຼະທຸກສິ່ງທຸກຢ່າງແຕ່ບໍ່ຍອມເສຍປະເທດຊາດ, ບໍ່ຍອມເປັນຂ້າທາດ", ບໍ່ມີຫຍັງປະເສີດກວ່າເອກະລາດ, ອິດສະຫຼະພາບ; ບົນພື້ນຖານ

ຂອງແນວທາງອັນຖືກຕ້ອງ, ປະດິດສ້າງຂອງພັກ, ພ້ອມກັບກຳລັງແຮງລວມຂອງທົ່ວປວງຊົນ, ທົ່ວກອງທັບ ແລະ ປະຊາຊົນຫວຽດນາມໄດ້ຕີຊະນະທຸກຍຸດທະສາດການສົງຄາມຂອງຈັກກະພັດອາເມລິກາ, ປົດປ່ອຍທົ່ວພາກໃຕ້ ແລະ ເຕົ້າໂຮມປະເທດຊາດເປັນອັນໜຶ່ງອັນດຽວໃນວັນທີ 30/4/1975.

ໄຊຍະນະດັ່ງກ່າວໄດ້ບັນທຶກເຂົ້າໃນປະຫວັດສາດຂອງປະຊາຊົນຫວຽດນາມຕະຫຼອດໄປຄືເປັນໜ້າເຈ້ຍໜຶ່ງທີ່ສະຫງ່າຜ່າເຜີຍ ແລະ ແບບຢ່າງທີ່ສະຫງ່າສົດໃສກວ່າໝູ່ຂອງໄຊຊະນະແຫ່ງລັດທິວິລະຊົນປະຕິວັດ ແລະ ເຂົ້າປະຫວັດສາດຂອງໂລກຄືເປັນໄຊຊະນະອັນຍິ່ງໃຫຍ່ຂອງສະຕະວັດທີ XX, ເປັນເຫດການທີ່ມີຄວາມສຳຄັນໃຫຍ່ຂອງໂລກ ແລະ ມີລັກສະນະຍຸກສະໄໝຢ່າງເລິກເຊິ່ງ (ປີນີ້ພວກເຮົາຈະສະເຫຼີມສະຫຼອງຄົບຮອບ 45 ປີ).

ໃນເວລາຕ້ອງແກ້ໄຂບັນດາຜົນເສຍອັນໜັກໜ່ວງຂອງສົງຄາມຢ່າງຮີບດ່ວນ, ປະຊາຊົນຫວຽດນາມສືບຕໍ່ປະເຊີນໜ້າກັບສົງຄາມແບບໃໝ່. ພາຍໃຕ້ການນຳພາຂອງພັກ, ກອງທັບ ແລະ ປະຊາຊົນເຮົາທັງສຸມໃສ່ຟື້ນຟູເສດຖະກິດ-ສັງຄົມ, ທັງຕໍ່ສູ້ປົກປັກຮັກສາຊາຍແດນ, ປົກປັກຮັກສາເອກະລາດ, ອະທິປະໄຕພື້ນແຜ່ນດິນອັນຄົບຖ້ວນອັນເປັນກຽດສັກສີຂອງປະເທດຊາດ; ພ້ອມກັນນັ້ນຕ້ອງເຮັດຫລ້ອນໜ້າທີ່ສາກົນຊ່ວຍປະຊາຊົນກຳປູເຈຍອອກຈາກໄພດັບສູນເຊື້ອຊາດ ແລະ ດຳເນີນພາລະກິດກໍ່ສ້າງຟື້ນຟູປະເທດຊາດ.

ຈາກຄວາມຮຽກຮ້ອງໃໝ່ແກ່ການພັດທະນາປະເທດຊາດ, ເພື່ອແກ້ໄຂບັນດາຈຸດຄົງຄ້າງຂອງກົນໄກທັນເປັນແຜນການລວມສູນທີ່ອາດຍາສິດເກື້ອກູນເຮັດໃຫ້ເກີດວິກິດການເສດຖະກິດ-ສັງຄົມໃນຊຸມປີຫຼັງສົງຄາມເຢັນ, ບົນພື້ນຖານການສະຫຼຸບແນວຄວາມຄິດ, ຄວາມປະດິດສ້າງ, ພຶດຕິກຳຕົວຈິງຂອງປະຊາຊົນ, ພັກເຮົາໄດ້ດຳເນີນການປ່ຽນແປງໃໝ່ແຕ່ລະພາກສ່ວນໃນຂົງເຂດກະສິກຳ, ອຸດສາຫະກຳ, ກ່ອນອື່ນໝົດແມ່ນປ່ຽນແປງໃໝ່ດ້ານຈິນຕະນາການທິດສະດີກ່ຽວກັບລັດທິສັງຄົມນິຍົມ ແລະ ສ້າງແນວທາງການປ່ຽນແປງໃໝ່ປະເທດຊາດເທື່ອລະກ້າວ.

ກອງປະຊຸມຄະນະຜູ້ແທນທົ່ວປະເທດຂອງພັກກອມມູນິດ ຫວຽດນາມ ຄັ້ງທີ VI (ເດືອນ 12 ປີ 1986), ບົນພື້ນຖານການວິເຄາະວິໄຈສະພາບການປະເທດຊາດ ແລະ ຜ່ານການຊອກຫາ, ພຶດຕິກຳຕົວຈິງ, ດ້ວຍຈິດໃຈ “ເບິ່ງໃສ່ຕົວຈິງ, ຕີລາຄາຕົວຈິງຢ່າງຖືກຕ້ອງ, ເວົ້າຕາມຄວາມຈິງ”, ໄດ້ວາງອອກແນວທາງການປ່ຽນແປງໃໝ່ປະເທດຊາດ, ເປັນຂີດໝາຍສຳຄັນໃນເສັ້ນທາງຂ້າມຜ່ານກ້າວຂຶ້ນສູ່ສັງຄົມນິຍົມຢູ່ຫວຽດນາມ.

ແນວທາງການປ່ຽນແປງໃໝ່ທີ່ວາງອອກນັ້ນ ໄດ້ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພຶດຕິກຳປະຫວັດສາດ, ສະແດງເຖິງຈັບຍາບັນທີ່ໜັກແໜ້ນ, ມີຈິນຕະນາການປະດິດສ້າງຂອງພັກກອມມູນິດຫວຽດນາມ ແລະ ເປີດສະໄໝໃໝ່ແກ່ການພັດທະນາປະເທດຊາດ.

ຫຼັງກອງປະຊຸມໃຫຍ່ຂອງພັກຄັ້ງທີ VI, ພັກໄດ້ບູລະນະໃຫ້ສົມບູນ, ທັງເປັນລະອຽດບັນດາແນວທາງນະໂຍບາຍການປ່ຽນແປງໃໝ່ເປັນເທື່ອລະກ້າວ ເຊິ່ງເນື້ອໃນພື້ນຖານ, ຕົ້ນຕໍແມ່ນໄດ້ສະແດງອອກໃນໂຄງການການເມືອງກໍ່ສ້າງປະເທດຊາດໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ (ໂຄງການການເມືອງ ປີ 1991 ແລະ ໂຄງການການເມືອງສະບັບປັບປຸງເພີ່ມເຕີ່ມ ປີ 2011) ແລະ ບັນດາເອກະສານສຳຄັນຂອງພັກຜ່ານແຕ່ລະໄລຍະ.

ໃນຊຸມປີ 1990 ຂອງສະຕະວັດທີ XX, ຜ່ານສິ່ງທ້າທາຍຕ່າງໆຈາກການລົ້ມລະລາຍຂອງຕົວແບບສັງຄົມນິຍົມຢູ່ສະຫະພາບໂຊວຽດ ແລະ ບັນດາປະເທດເອີຣົບຕາເວັນອອກ, ພັກກອມມູນິດຫວຽດນາມ, ປະຊາຊົນ ຫວຽດນາມ ໄດ້ຢຶດໝັ້ນ, ສືບຕໍ່ກ້າວຂຶ້ນຢ່າງໜັກແໜ້ນ ແລະ ມີປະດິດສ້າງບົນເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມທີ່ເໝາະສົມກັບເງື່ອນໄຂຕົວຈິງ ແລະ ຈຸດພິເສດຂອງຫວຽດນາມ.

ຄະນະບໍລິຫານສູນກາງພັກແຕ່ສະໄໝທີ VI ຫາສະໄໝທີ XII ໄດ້ວາງອອກຫຼາຍມະຕິກ່ຽວກັບບັນດາບັນຫາພື້ນຖານ, ສຳຄັນຂອງພັກ ແລະ ການພັດທະນາປະເທດຊາດ. ສະພາແຫ່ງຊາດໄດ້ຫັນບັນດາມະຕິດັ່ງກ່າວມາເປັນລະບົບກົດໝາຍ ແລະ ບັນດາກົດໝາຍຕ່າງ, ເພື່ອສ້າງພື້ນຖານນິຕິກຳທີ່ຄົບຖ້ວນ ແລະ ເໝາະສົມແກ່ການປ່ຽນແປງໃໝ່. ສ່ວນລັດຖະບານໄດ້ຫັນມາເປັນບັນດາກົນໄກ, ນະໂຍບາຍ ແລະ ວິທີການແກ້ໄຂລະອຽດເພື່ອຄຸ້ມຄອງ, ບັນຊາ, ບໍລິຫານພາລະກິດແຫ່ງການສ້າງສາ ແລະ ພັດທະນາປະເທດຊາດ.

ໃນວຽກງານກຳນົດ, ວາງອອກແນວທາງການປ່ຽນແປງໃໝ່, ພັກກອມມູນິດຫວຽດນາມເວລາກໍກຳແໜ້ນ ແລະ ໝູນໃຊ້ບັນດາຫຼັກການ, ທັດສະນະພື້ນຖານ, ວິທີວິທະຍາສັດຈະວິພາກຂອງລັດທິມາກ-ເລນິນ, ແນວຄິດປະທານ ໂຮ່ຈິມິງຢ່າງມີປະດິດສ້າງ ແລະ ບັນບາບົດຮຽນຈາກພຶດຕິກຳຕົວຈິງຢູ່ພາຍໃນປະເທດ ແລະ ສາກົນ, ແກ້ໄຂບັນດາການພົວພັນພື້ນຖານເຊັ່ນ: ການພັດທະນາເສດຖະກິດຕະຫຼາດກຳນົດທິດສັງຄົມນິຍົມ; ສ້າງລັດແຫ່ງກົດໝາຍສັງຄົມນິຍົມທີ່ຂອງປະຊາຊົນ, ເພື່ອປະຊາຊົນໃຫ້ສຳເລັດເປັນຢ່າງດີ; ປະສານສົມທົບ ຢ່າງແໜ້ນແຟ້ນລະຫວ່າງການປ່ຽນແປງໃໝ່ດ້ານເສດ

ຖະກິດກັບການປ່ຽນແປງໃໝ່ດ້ານການເມືອງ, ລະຫວ່າງການຂະຫຍາຍຕົວເສດຖະກິດກັບຄວາມກ້າວໜ້າ ແລະ ຄວາມສະເໝີພາບໃນສັງຄົມ; ປະສານສົມທົບ ການພັດທະນາເສດຖະກິດ-ສັງຄົມກັບການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການກໍ່ສ້າງກັບການປົກປັກຮັກສາປະເທດຊາດ; ລະຫວ່າງເອກະລາດ, ເປັນເຈົ້າຕົນເອງ ແລະ ເປັນເຈົ້າການໃນການເຊື່ອມໂຍງເຂົ້າສາກົນຢ່າງຕັ້ງໜ້າ; ລະຫວ່າງພັກນໍາພາ, ລັດຄຸ້ມຄອງ, ປະຊາຊົນເປັນເຈົ້າ...ຢ່າງມີປະສິດທິຜົນ, ບໍ່ມີລັກສະນະດ້ານດຽວ, ຂວາຈັດ, ຖືຈິດເປັນໃຫຍ່, ຫັນຈາກເບື້ອງນີ້ໄປສູ່ເບື້ອງອື່ນ.

ຕົວຈິງ, ພາຍຫຼັງ 35 ປີດໍາເນີນພາລະກິດແຫ່ງການປ່ຽນແປງໃໝ່, ຈາກປະເທດໜຶ່ງທີ່ທຸກຍາກ, ມີພື້ນຖານດ້ານວັດຖຸ-ເຕັກນິກ, ພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມທີ່ຫຼ້າຫຼັງ, ລະດັບຕໍ່າ, ປັດຈຸບັນ, ຫວຽດນາມ ໄດ້ກ້າວຂຶ້ນເປັນປະເທດກໍາລັງພັດທະນາ, ມີລາຍຮັບລະດັບປານກາງ; ວັດທະນະທໍາ, ສັງຄົມສືບຕໍ່ພັດທະນາ, ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນນັບມື້ນັບດີຂຶ້ນເທື່ອລະກ້າວ; ວຽກງານກໍ່ສ້າງພັກ ແລະ ລະບົບການເມືອງມີບາດກ້າວກະໂດດ, ປຶກແຜ່ນມະຫາສາມັກຄີທົ່ວປວງຊົນໄດ້ປັບປຸງຢ່າງບໍ່ຢຸດຢັ້ງ; ການເມືອງ, ສັງຄົມມີຄວາມສະຖຽນລະພາບ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນເອກະລາດ, ອໍານາດອະທິປະໄຕໄດ້ຮັກສາແໜ້ນ; ບົດບາດອິດທິພົນ ແລະຄວາມເຊື່ອຖືຂອງປະເທດນັບມື້ນັບໄດ້ຮັບການຍົກສູງຂຶ້ນໃນເວທີສາກົນ.

ມາເຖິງປັດຈຸບັນ, ຫວຽດນາມໄດ້ກາຍເປັນປະເທດໜຶ່ງທີ່ມີຈໍານວນພົນລະເມືອງເກືອບ 100 ລ້ານຄົນດ້ວຍລະດັບລະຮັບສະເລ່ຍ 2.800 USD/ຄົນ; ໄດ້ເຂົ້າຮ່ວມຫຼາຍອົງການຈັດຕັ້ງສາກົນ, ກາຍເປັນພາຄີທີ່ຕັ້ງໜ້າ, ມີຄວາມຮັບຜິດຊອບໃນບັນດາການເຄື່ອນໄຫວຕ່າງໆໃນເວທີສາກົນ.

ມໍ່ໆນີ້, ສະມັດຊາໃຫຍ່ສະຫະປະຊາຊາດໄດ້ປ່ອນບັດຄັດເລືອກດ້ວຍຄະແນນສຽງທີ່ສູງຫຼາຍ, ເກືອບໄດ້ທຸກປະເທດເລືອກເອົາ, ເຊິ່ງເປັນຄັ້ງທີສອງ ທີ່ໄດ້ຖືກເລືອກເປັນສະມາຊິກບໍ່ຖາວອນສະພາຄວາມໝັ້ນຄົງສະຫະປະຊາຊາດ.

ດ້ວຍບັນດາຜົນສໍາເລັດອັນໃຫຍ່ຫຼວງບັນລຸໄດ້, ຫວຽດນາມມີພື້ນຖານເພື່ອຢືນຢັນວ່າ, ຫວຽດນາມ ບໍ່ເຄີຍມີເວລາໃດໃນປະຫວັດສາດທີ່ມີກາລະໂອກາດ, ທ່າແຮງບົ່ມຊ້ອນ, ບົດບາດອິດທິພົນ, ຄວາມເຊື່ອຖືຄືດັ່ງປັດຈຸບັນ.

*ຮຽນບັນດາສະຫາຍ ແລະພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫຼາຍ,*

ພຶດຕິກຳຕົວຈິງທີ່ອຸດົມສົມບູນ, ມີຊີວິດຊີວາຂອງການປະຕິວັດທວຽດນາມໃນໄລຍະ 90 ປີຜ່ານມາໄດ້ພິສູດວ່າ ການກຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງພັກແມ່ນປັດໄຈອັນດັບຕົ້ນໃນການຕັດສິນທຸກໄຊຊະນະຂອງການປະຕິວັດ, ສ້າງວິລະກຳອັນລ້ຳເລີດໃນຜືນແຜ່ນດິນຂອງປະເທດທວຽດນາມ.

ອີກດ້ານໜຶ່ງ, ຜ່ານວິວັດຂະບວນແຫ່ງການນຳພາການປະຕິວັດ, ພັກກອມມູນິດທວຽດນາມໄດ້ຮັບການຊຸບຫຼໍ່ ແລະ ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ, ສົມກັບບົດບາດແລະພາລະກຳນຳພາການປະຕິວັດ ແລະ ຄວາມໄວ້ເນື້ອເຊື່ອໃຈ, ຄວາມມຸ້ງຫວັງຢ່າງແຮງກ້າຂອງປະຊາຊົນ.

ພຶດຕິກຳຕົວຈິງນັ້ນຢືນຢັນສັດຈະທຳໜຶ່ງ: ຢູ່ທວຽດນາມ, ບໍ່ມີກຳລັງການເມືອງໃດ, ນອກຈາກພັກກອມມູນິດ ທວຽດນາມ ທີ່ມີຄົບຫຼັກໝັ້ນ, ສະຕິປັນຍາ, ບົດຮຽນ, ອິດທິພົນ ແລະ ຄວາມສາມາດໃນການນຳພາປະເທດຊາດຂ້າມຜ່ານທຸກຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ, ນຳເອົາພາລະກິດການປະຕິວັດຂອງຊົນຊາດ ທວຽດນາມ ທີ່ໄດ້ຮັບໄຊຊະນະນີ້ເຖິງໄຊຊະນະອື່ນ. ແລະ ໃນວິວັດຂະບວນການແຫ່ງການດັ່ງກ່າວ, ພັກກອມມູນິດທວຽດນາມ ໄດ້ສະສົມ ແລະ ຖອດຖອນ ບົດຮຽນອັນປະເສີດຫຼາຍບົດຮຽນ, ຫຼໍ່ຫຼອມບັນດາມູນເຊື້ອອັນສະຫງ່າລາສີຫຼາຍຂຶ້ນເຊິ່ງປັດຈຸບັນຄືນ ທວຽດນາມ ມີໜ້າທີ່ຕ້ອງອອກເຫື່ອແຮງເພື່ອປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອດັ່ງກ່າວ. ນັ້ນແມ່ນມູນເຊື້ອຈົ່ງຮັກພັກດີອັນຫຼົ້ນເຫຼືອຕໍ່ຜົນປະໂຫຍດຂອງຊົນຊາດ ແລະ ຊົນຊັ້ນຄົນ, ຍຶດໝັ້ນຈຸດໝາຍ, ອຸດົມການເອກະລາດຊົນຊາດທີ່ຕິດແໜ້ນກັບລັດທິສັງຄົມນິຍົມບົນພື້ນຖານລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈີມິນ.

ນັ້ນແມ່ນມູນເຊື້ອຮັກສາແໜ້ນຄວາມເປັນເອກະລາດ, ຄວາມເປັນເຈົ້າການຕໍ່ແນວທາງ; ກຳແໜ້ນ, ໝູນໃຊ້ ແລະ ພັດທະນາຢ່າງປະດິດສ້າງລັດທິມາກ-ເລນິນ, ທາບທາມບົດຮຽນຂອງສາກົນເພື່ອວາງແນວທາງຢ່າງຖືກຕ້ອງ ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນບັນດາໜ້າທີ່ການປະຕິວັດ.

ນັ້ນແມ່ນມູນເຊື້ອສະໜິດແໜ້ນອັນເລືອດເນື້ອລະຫວ່າງພັກກັບປະຊາຊົນ, ຍາມໃດກໍຖືເອົາການຮັບໃຊ້ປະຊາຊົນເປັນວິຖີຊີວິດ ແລະ ຈຸດໝາຍເພື່ອສູ້ຊົນ. ນັ້ນແມ່ນມູນເຊື້ອສາມັກຄີເປັນເອກະພາບ, ມີການຈັດຕັ້ງ ແລະ ໃຊ້ລະບຽບວິໄນຢ່າງແໜ້ນແຟ້ນ, ເຂັ້ມງວດບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ຕຳນິຕິຊົມດ້ວຍຕົນເອງ, ຕຳນິຕິຊົມ ແລະຄວາມຮັກແພງລະຫວ່າງສະຫາຍເຊິ່ງກັນແລະກັນ. ນັ້ນແມ່ນມູນເຊື້ອສາມັກຄີສາກົນບໍລິສຸດດູດດື່ມ, ຜູດຜ່ອງອີງຕາມບັນດາຫຼັກການ ແລະຈຸດໝາຍອັນສູງສົ່ງ.

ທວນຄືນເສັ້ນທາງ 90 ປີແຫ່ງການສ້າງສາ, ສູ້ຮົບ ແລະ ເຕີບໃຫຍ່ຂອງພັກກອມມູນິດ ຫວຽດນາມ ແລະໃນໄລຍະອັນສັກສິດນີ້, ພວກເຮົາສະແດງຄວາມຮູ້ບຸນຄຸນອັນຫຼົ້ນເຫຼືອມາຍັງຜົນງານອັນໃຫຍ່ຫຼວງຂອງປະທານໂຮ່ຈີມິນ-ຜູ້ນໍາອັດສະລິຍະຂອງພັກກອມມູນິດຫວຽດນາມ ແລະຊົນຊາດຫວຽດນາມ, ຜູ້ເປັນຄູອາຈານທີ່ຍິ່ງໃຫຍ່ ຂອງການປະຕິວັດຫວຽດນາມ-ວິລະຊົນປົດປ່ອຍຊົນຊາດ, ນັກວັດທະນະທໍາຜູ້ລືຊື່ໃນໂລກ.

ຜູ້ໄດ້ອຸທິດຕະຫຼອດຊີວິດຂອງຕົນໃຫ້ແກ່ປະຊາຊົນ, ໃຫ້ແກ່ປະເທດຊາດ, ຊັກຈູງພັກກອມມູນິດຫວຽດນາມ, ປະຊາຊົນຫວຽດນາມສ້າງຂຶ້ນບັນດາໄຊຊະນະອັນສະຫງ່າງາມ ແລະ ເຮັດໃຫ້ຊົນຊາດຫວຽດນາມ, ປະຊາຊົນຫວຽດນາມ ແລະຜືນແຜ່ນດິນ ແລະແມ່ນໍ້າລໍາເຊຂອງປະເທດຫວຽດນາມມີຄວາມສະຫງ່າຜ່າເຜີຍກວ່າ.

ປະເທດຫວຽດນາມ ນັບມື້ນັບຂະຫຍາຍຕົວ, ປະຊາຊົນຫວຽດນາມນັບມື້ນັບມີຢູ່ມີກິນ, ມີຄວາມຜາສຸກ, ຍິ່ງເປັນການພິສູດໃຫ້ເຫັນວ່າແນວຄິດ, ພາລະກິດ, ຄຸນສົມບັດ ແລະ ແບບແຜນການດໍາລົງຊີວິດຂອງປະທານ ໂຮ່ຈີມິນ ແມ່ນຊັບສິນອັນລໍ້າຄ່າ, ເປັນແປວໄຟເຍືອງທາງໃຫ້ແກ່ຊົນຊາດ ຫວຽດນາມ ກ້າວຂຶ້ນສູ່ອະນາຄົດຢ່າງໜັກແໜ້ນ.

ພວກເຮົາຍາມໃດກໍຈາລຶກເຖິງບຸນຄຸນອັນໃຫຍ່ຫຼວງຂອງບັນດາການນໍາລຸ້ນກ່ອນ, ຂອງບັນດານັກຮົບ, ວິລະຊົນນັບລ້ານຄົນ, ບັນດາລູກຫຼານຂອງຊົນຊາດຫວຽດນາມໄດ້ເສຍສະຫຼະຊີວິດໃຫ້ແກ່ປະເທດຊາດດ້ວຍຄວາມອົງອາດກ້າຫານເພື່ອຄວາມເປັນເອກະລາດ, ອໍານາດອະທິປະໄຕ, ຄວາມເປັນເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ, ເພື່ອສັງຄົມນິຍົມ ແລະເພື່ອພັນທະສາກົນອັນສູງສົ່ງ.

ພວກເຮົາສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ຕໍ່ບັນດາລຸ້ນການນໍາການປະຕິວັດອາວຸໂສ, ບັນດາຄອບຄົວວິລະຊົນ, ບັນດາແມ່ຫວຽດນາມວິລະຊົນ, ບັນດາສະຫາຍທະຫານທີ່ບາດເຈັບ, ຕິດພະຍາດຈາກສົງຄາມ, ບັນດາຄອບຄົວທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ພ້ອມກັບທົ່ວປວງຊົນ ແລະນັກຮົບທົ່ວປະເທດໄດ້ສູ້ຊົນຢ່າງພິລະອາດຫານ, ເສຍສະຫຼະຊີວິດໃຫ້ແກ່ປະເທດຊາດ, ອອກແຮງງານຢ່າງປະດິດສ້າງ, ປະກອບສ່ວນອັນໃຫຍ່ຫຼວງແກ່ພາລະກິດການປະຕິວັດອັນສະຫງ່າງາມຂອງຊົນຊາດຫວຽດນາມ.

ດ້ວຍຄວາມອ່ອນນ້ອມຖ່ອມຕົວຂອງນັກປະຕິວັດ, ພວກເຮົາຍັງສາມາດເວົ້າໄດ້ວ່າ: "ພັກກອມມູນິດຫວຽດນາມແມ່ນຍິ່ງໃຫຍ່ຢ່າງແທ້ຈິງ! ປະຊາຊົນຫວຽດນາມແມ່ນວິລະຊົນຢ່າງແທ້ຈິງ!"

ພວກເຮົາຍາມໃດກໍຈົດຈໍາ ແລະ ສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ການສະໜັບສະໜູນ ແລະ ການຊ່ວຍເຫຼືອອັນປະເສີດຂອງປະຊາຊົນບັນດາປະເທດສັງຄົມ

ນິຍົມອ້າຍນ້ອງ, ບັນດາກຳລັງກ້າວໜ້າພ້ອມກັບເພື່ອນມິດທົ່ວ 5 ທະວີບຕໍ່ກັບພາລະກິດການຕໍ່ສູ້ປົດປ່ອຍປະເທດຊາດ, ເຕົ້າໂຮມປະເທດຊາດເປັນອັນໜຶ່ງອັນດຽວໃນເມື່ອກ່ອນກໍຄືໃນພາລະກິດແຫ່ງການສ້າງສາ ແລະປົກປັກຮັກສາປະເທດຊາດຫວຽດນາມປັດຈຸບັນ.

*ຮຽນບັນດາສະຫາຍ ແລະພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫຼາຍ,*

ປັດຈຸບັນ, ທົ່ວພັກ, ທົ່ວປວງຊົນ ແລະທົ່ວກອງທັບພວມອອກເຫື່ອແຮງສູ້ຊົນປະຕິບັດໂຄງການການເມືອງຂອງພັກ, ລັດຖະທຳມະນູນຂອງລັດ, ຍູ້ແຮງພາລະກິດແຫ່ງການປ່ຽນແປງໃໝ່, ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ, ພັດທະນາເສດຖະກິດການຕະຫຼາດຕາມກຳນົດທິດສັງຄົມນິຍົມ, ເປີດປະຕູເຊື່ອມໂຍງສາກົນ, ປະຕິບັດສອງໜ້າທີ່ຍຸດທະສາດແມ່ນສ້າງສາ ແລະປົກປັກຮັກສາແໜ້ນປະເທດຊາດ, ເພື່ອຈຸດໝາຍປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ປະຊາທິປະໄຕ, ຍຸຕິທຳ ແລະສີວິໄລຢ່າງຮອບດ້ານ ແລະພ້ອມພຽງຄົບຊຸດ.

ນີ້ແມ່ນພາລະກິດການປະຕິວັດອັນຍິ່ງໃຫຍ່, "ການສູ້ຮົບຄັ້ງໃຫຍ່" ຄືດັ່ງລຸງໂຮ່ໄດ້ເວົ້າ, ແຕ່ກໍມີຄວາມຫຍຸ້ງຍາກ, ສັບສົນຫຼາຍປະການ. ໃນສະພາບການສາກົນ ແລະພາຍໃນ, ຄຽງຄູ່ກັບຂໍ້ສະດວກດີ, ກາລະໂອກາດ ແມ່ນມີຂໍ້ຫຍຸ້ງຍາກ, ສິ່ງທ້າທາຍຫຼາຍປະການ, ພວກເຮົາຢືນຢູ່ທ່າມກາງຂອງບັນຫາໃໝ່ຫຼາຍຢ່າງທີ່ຕ້ອງໄດ້ຮັບການແກ້ໄຂ, ຫຼາຍວຽກງານມີຄວາມສັບສົນທີ່ຈຳເປັນຕ້ອງໄດ້ແກ້ໄຂ.

ສະພາບການດັ່ງກ່າວຮຽກຮ້ອງທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບຫວຽດນາມຍິ່ງກວ່າເວລາໃດໝົດ, ຕ້ອງເສີມຂະຫຍາຍມູນເຊື້ອຮັກຊາດ ແລະ ການປະຕິວັດ, ຈິດໃຈສາມັກຄີ, ຄວາມຮັບຜິດຊອບ, ຄວາມມານະພະຍາຍາມສູ້ຊົນຂ້າມຜ່ານທຸກຂໍ້ຫຍຸ້ງຍາກ, ສິ່ງທ້າທາຍເພື່ອສ້າງສາປະເທດ ຫວຽດນາມ ນັບມື້ນັບສວຍງາມກວ່າເກົ່າ.

ການສູ້ຊົນອັນເດັດດ່ຽວໜຽວແໜ້ນ, ຄວາມປະດິດສ້າງຂອງທົ່ວປວງຊົນ, ຂອງບັນດາຂະແໜງການ, ບັນດາທ້ອງຖິ່ນ, ບັນດາພາກສ່ວນເສດຖະກິດແມ່ນປັດໄຈສຳຄັນຍິ່ງຕໍ່ການພັດທະນາຂອງປະເທດຫວຽດນາມ.

ພັກກອມມູນິດ ຫວຽດນາມ ຕ້ອງອອກແຮງເພື່ອຊຸກຍູ້ການກໍ່ສ້າງ, ປັບປຸງປົວແປງພັກ, ເຮັດໃຫ້ພັກນັບມື້ນັບໂປ່ງໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ເຮັດຫຼ້ອນໜ້າທີ່ເປັນກອງນຳໜ້ານຳພາພາລະກິດການປະຕິວັດໃນໄລຍະໃໝ່.

ແຕ່ພາຍຫຼັງກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກກອມມູນິດມາເຖິງປັດຈຸບັນ, ພັກກອມມູນິດ ຫວຽດນາມ ໄດ້ໃຊ້ເວລາ ແລະ ເຫື່ອແຮງອັນບໍ່ໜ້ອຍໃຫ້ແກ່ວຽກງານກໍ່ສ້າງພັກ, ຖືວຽກງານກໍ່ສ້າງພັກແມ່ນໜ້າທີ່ຫຼັກແຫຼ່ງ. ໃນຊ່ວງເວລາມໍ່ໆນີ້, ທົ່ວພັກໄດ້ດຳເນີນ

ປະຕິບັດການກໍ່ສ້າງ, ປັບປຸງພັກຕາມຈິດໃຈມະຕິສູນກາງ 4 ສະໄໝທີ XI, ສະໄໝທີ XII ບັນລຸບັນດາຜົນສໍາເລັດ ແລະ ບົດຮຽນໃນເບື້ອງຕົ້ນແມ່ນສຳຄັນຫຼາຍ, ປະກອບສ່ວນເຂົ້າໃນການສະກັດກັ້ນ, ຍູ້ຖອຍສິ່ງຫຍໍ້ທໍ້ເປັນບາດກ້າວໜຶ່ງ, ຍົກສູງຄວາມສາມາດໃນການນໍາພາ ແລະ ກໍາລັງສູ້ຮົບຂອງພັກ.

ເຖິງຢ່າງໃດກໍຕາມ, ວຽກງານກໍ່ສ້າງພັກຍັງມີອີກຫຼາຍວຽກທີ່ຕ້ອງລົງມືເຮັດ, ເປັນຕົ້ນແມ່ນການຕໍ່ສູ້ຕ້ານກັບການເຊື່ອມຖອຍດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດໍາລົງຊີວິດ; ບັນດາປະກົດການ "ຜັນແປດ້ວຍຕົນເອງ", "ຫັນປ່ຽນດ້ວຍຕົນເອງ"; ໄພສໍ້ລາດບັງຫຼວງ, ຟຸ່ມເຟືອຍ, ອາດຍາສິດ, ຫ່າງເຫີນຈາກປະຊາຊົນ...

ບັນດາອິດທິກໍາລັງປໍລະປັກຍັງພວມຊອກຫາທຸກວິທີທາງເພື່ອທໍາລາຍພາລະກິດການປະຕິວັດຂອງປະຊາຊົນ ຫວຽດນາມ; ພວກເຂົາດໍາເນີນການໂຄສະນາບິດເບືອນ, ກ່າວປະນາມພັກກອມມູນິດ ຫວຽດນາມ, ລັດຫວຽດນາມ, ໂຈມຕີໂດຍກົງຕໍ່ລະບົບແນວຄິດ, ໂຄງການການເມືອງ, ແນວທາງການເມືອງຂອງພັກ, ຍຸແຍ່, ແບ່ງແຍກພາຍໃນພັກ, ແບ່ງແຍກພັກ, ລັດກັບປະຊາຊົນ, ເພື່ອຫວັງໃຫ້ພັກກອມມູນິດ, ລະບອບຂອງພວກເຮົານັບແຕ່ກົກ, ແຕ່ພາຍໃນລົ້ມລະລາຍ, ເຊິ່ງເປັນກົນອຸບາຍທີ່ຊົ່ວຮ້າຍ ແລະອັນຕະລາຍເປັນຢ່າງຍິ່ງ.

ທິດທາງລວມຂອງວຽກງານກໍ່ສ້າງ, ປັບປຸງບົວແປງພັກໃນປັດຈຸບັນແມ່ນສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມ, ປົກປັກຮັກສາ ແລະເພີ່ມທະວີທາດແທ້ການປະຕິວັດ ແລະລັກສະນະ ນໍາໜ້າຂອງພັກ, ກໍ່ສ້າງພັກໂປ່ງໃສ, ເຂັ້ມແຂງ ແລະ ໜັກແໜ້ນທັງດ້ານການເມືອງ, ແນວຄິດ, ຄຸນສົມບັດ, ການຈັດຕັ້ງ, ພະນັກງານຢ່າງແທ້ຈິງ, ປ່ຽນແປງໃໝ່ວິທີການນໍາພາ, ເພີ່ມທະວີສາຍພົວພັນອັນເລືອດເນື້ອລະຫວ່າງພັກກັບປະຊາຊົນ, ຮັບປະກັນໃຫ້ແກ່ພັກມີກໍາລັງພຽງພໍນໍາພາພາລະກິດຂອງປະເທດຢ່າງບໍ່ຢຸດຢັ້ງ.

ໃນເງື່ອນໄຂພັກກອມມູນິດ ຫວຽດນາມ ແມ່ນພັກກໍາອໍານາດ, ເຄື່ອນໄຫວໃນສະພາບແວດລ້ອມການທີ່ພັດທະນາເສດຖະກິດການຕະຫຼາດ, ເປີດປະຕູເພື່ອເຊື່ອມໂຍງ; ພະນັກງານ, ສະມາຊິກພັກຮັກສາຫຼາຍຕໍາແໜ່ງງານທີ່ສໍາຄັນ, ຕ້ອງປະເຊີນໜ້າກັບບັນດາການຈອບອອຍຂອງເງິນຄໍາ, ຂອງວັດຖຸຊັບສິນ, ສິດອໍານາດ, ຜົນປະໂຫຍດສ່ວນຕົວ, ພວກເຮົາຍິ່ງຕ້ອງເບິ່ງແຍງດູແລ, ຮັກສາໄດ້ທາດແທ້ການປະຕິວັດ ແລະ ລັກສະນະນໍາໜ້າຂອງພັກ.

ຖ້າບໍ່ມີຄວາມຮັບຮູ້ຢ່າງເລິກເຊິ່ງຕໍ່ບັນຫາດັ່ງກ່າວ, ຖ້າຫາກວ່າພະນັກງານ, ສະມາຊິກພັກບໍ່ມີຄວາມຫ້າວຫັນ ແລະ ບໍ່ມີມານະຈິດໃນການເຝິກຝົນຫຼໍ່ຫຼອມ ແລະ ສຶກສາ

ກໍ່ຈະຖືກເຊື່ອມຊຸມປ່ຽນທາດຢ່າງງ່າຍດາຍ. ບັນຫາການຮັກສາແທ້ນທາດແທ້ຂອງພັກ-ພັກກອມມູນິດໜຶ່ງ, ພັກການປະຕິວັດທີ່ຊອບທຳ, ເຄື່ອນໄຫວເພື່ອພາລະກິດຂອງຊົນຊັ້ນກຳມະກອນ, ຂອງຊົນຊາດ, ເພື່ອຜົນປະໂຫຍດຂອງປະຊາຊົນແມ່ນບັນຫາພື້ນຖານ ແລະ ສຳຄັນເປັນຢ່າງຍິ່ງ.

ປະທານໂຮ່ຈີມິນເຄີຍໄດ້ຕັກເຕືອນວ່າ: "ຊົນຊາດໜຶ່ງ, ພັກໜຶ່ງ ແລະ ແຕ່ລະຄົນ, ມື້ວານອາດຍິ່ງໃຫຍ່, ມີແຮງດຶງດູດຄວາມສົນໃຈຫຼາຍ, ແຕ່ບໍ່ແນ່ນອນວ່າໃນມື້ນີ້ ແລະ ມື້ອື່ນຍັງໄດ້ຮັບຄວາມຮັກແພງ ແລະ ສັນລະເສີນຂອງທຸກຄົນອີກຖ້າຫາກຈິດໃຈບໍ່ມີຄວາມປອດໃສ, ຖ້າຕົກຢູ່ໃນລັດທິບຸກຄົນ".

ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 4 ສະໄໝທີ XI ແລະ ສະໄໝທີ XII ວ່າດ້ວຍການກໍ່ສ້າງພັກໄດ້ຢືນຢັນວ່າຕ້ອງດຳເນີນການກໍ່ສ້າງ, ປັບປຸງປົວແປງພັກຢ່າງຕັ້ງໜ້າ ແລະເດັດດ່ຽວ, ເຂັ້ມແຂງ, ເພື່ອສ້າງຄວາມຫັນປ່ຽນຢ່າງຈະແຈ້ງກວ່າໃນບັນດາດ້ານ, ສະກັດກັ້ນ ແລະຍູ້ຖອຍສະພາບການເຊື່ອມຖອຍ, ປັບປຸງຄວາມຍຶດໝັ້ນກ່ຽວກັບຈຸດໝາຍ, ອຸດົມການປະ ຕິວັດ; ເພີ່ມທະວີຄວາມເປັນເອກະພາບດ້ານມານະຈິດ ແລະການກະທຳ; ປັບປຸງການ ຈັດຕັ້ງຢ່າງແໜ້ນແຟ້ນ; ເພີ່ມທະວີສາຍພົວພັນສະໜິດແໜ້ນກັບປະຊາຊົນ; ຍົກສູງຄວາມສາມາດໃນການນຳພາ ແລະກຳລັງສູ້ຮົບຂອງພັກ, ຖືວ່ານີ້ແມ່ນບັນຫາເປັນຢູ່ເປັນ ຕາຍຂອງພັກກອມມູນິດຫວຽດນາມ, ຂອງລະບອບ.

ພັກປະຕິວັດຊອບທຳໜຶ່ງທີ່ມີແນວທາງຖືກຕ້ອງ, ມີການຈັດຕັ້ງຢ່າງແໜ້ນແຟ້ນ, ມີຖັນແຖວພະນັກງານ, ສະມາຊິກພັກທີ່ໂປ່ງໃສ, ເປັນແບບຢ່າງ, ໝົດຈິດໝົດໃຈ, ສະໜິດແໜ້ນອັນເລືອດເນື້ອກັບປະຊາຊົນ, ໄດ້ປະຊາຊົນສະໜັບສະໜູນ, ພັກນັ້ນມີກຳລັງແຮງອັນໃຫຍ່ຫຼວງ, ບໍ່ມີອິດທິກຳລັງໃດສາມາດສະກັດກັ້ນບົນເສັ້ນທາງຊັກຈູງຊົນຊາດກ້າວຂຶ້ນ.

*ຮຽນບັນດາສະຫາຍ ແລະພີ່ນ້ອງຮ່ວມຊາດທີ່ຮັກແພງທັງຫຼາຍ,*

ປີນີ້, ພວກເຮົາສະເຫຼີມສະຫຼອງວັນສ້າງຕັ້ງພັກໃນທ່າມກາງໄລຍະເວລາທີ່ມີຄວາມໝາຍສຳຄັນພິເສດ: ປີ 2020 ເປັນປີສຸດທ້າຍຂອງສະໄໝກອງປະຊຸມໃຫຍ່ຄັ້ງທີ XII; ເປັນປີດຳເນີນກອງປະຊຸມໃຫຍ່ອົງຄະນະພັກບັນດາຂັ້ນກ້າວຂຶ້ນສູ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XIII ຂອງພັກ; ເປັນປີສະເຫຼີມສະຫຼອງຫຼາຍເຫດການການເມືອງສຳຄັນຍິ່ງ; ເປັນປີຫວຽດນາມປະຕິບັດບົດບາດປະທານອາຊຽນ ແລະສະມາຊິກບໍ່ຖາວອນສະພາຄວາມໝັ້ນຄົງສະຫະປະຊາຊາດ.

ສະພາບການສາກົນ ແລະພາຍໃນປະເທດສ້າງກາລະໂອກາດ, ຂໍ້ສະດວກຫຼາຍຢ່າງ ແຕ່ກໍມີຄວາມຫຍຸ້ງຍາກ, ສິ່ງທ້າທາຍບໍ່ໜ້ອຍ, ໄດ້ຮຽກຮ້ອງທົ່ວພັກ, ທົ່ວປວງຊົນ ແລະທົ່ວກອງທັບຫວຽດນາມຕ້ອງມານະພະຍາຍາມສູງ, ຕັດສິນໃຈສູງ, ສູ້ຊົນເພື່ອສຳເລັດໜ້າທີ່ພັດທະນາເສດຖະກິດ-ສັງຄົມ; ເພີ່ມທະວີຄວາມໝັ້ນຄົງດ້ານເສດຖະກິດມະຫາພາກ, ຍູ້ແຮງປະຕິບັດບັນດາບາດກ້າວກະໂດດຍຸດທະສາດ, ຫັນໂຄງປະກອບພື້ນຖານເສດຖະກິດຄືນໃໝ່ຕິດກັບການປ່ຽນແປງໃໝ່ຮູບແບບການເຕີບໂຕ, ຮັບ ປະກັນຄວາມສະຫງົບ ແລະປອດໄພດ້ານສັງຄົມ ແລະສະຫວັດດີການສັງຄົມ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

ຮັກສາເອກະລາດ, ອຳນາດອະທິປະໄຕ ແລະສະພາບແວດລ້ອມສັນຕິພາບ, ຄວາມເປັນສະຖຽນລະພາບເພື່ອພັດທະນາປະເທດຊາດ; ຍູ້ແຮງສາຍພົວພັນການຕ່າງປະເທດ. ສຸມໃສ່ຈັດຕັ້ງສຳເລັດກອງປະຊຸມໃຫຍ່ອົງຄະນະພັກບັນດາຂັ້ນກ້າວເຂົ້າສູ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XIII ຂອງພັກ, ຕິດພັນກັບການສືບຕໍ່ປະຕິບັດມະຕິສູນກາງ 4 ສະໄໝທີ XI, ສະໄໝທີ XII ຕໍ່ການກໍ່ສ້າງພັກ, ມະຕິຄຳສັ່ງເລກທີ 05 ຂອງກົມການເມືອງກ່ຽວກັບການຍູ້ແຮງການຮ່ຳຮຽນ ແລະປະຕິບັດຕາມແນວຄິດ, ຄຸນສົມບັດ, ແບບແຜນການດຳລົງຊີວິດຂອງປະທານໂຮ່ຈີມິນ, ສ້າງຄວາມຫັນປ່ຽນໃນວຽກງານກໍ່ສ້າງ, ປັບປຸງພັກໃຫ້ແຂງແຮງກວ່າເກົ່າ.

ດ້ວຍຄວາມປີຕິຊົມຊື່ນ, ຄວາມເອກອ້າງທະນົງໃຈ, ພວກເຮົາເຊື່ອໝັ້ນຢ່າງແນວແນ່ວ່າ, ພັກກອມມູນິດຫວຽດນາມຈະເຮັດສຳເລັດໜ້າທີ່ໜັກໜ່ວງຂອງຕົນ. ທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບຮ່ວມແຮງ, ຮ່ວມໃຈ, ສູ້ຊົນສ້າງປະເທດຫວຽດນາມສັນຕິພາບ, ເອກະພາບ, ເອກະລາດ, ປະຊາທິປະໄຕ, ເຂັ້ມແຂງ, ກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ.

*ຄວາມຈະເລີນຮຸ່ງເຮືອງຍາມໃດກໍ່ຢູ່ນຳປະເທດຫວຽດນາມສີວິໄລ ແລະ ວິລະຊົນ*

*ພັກກອມມູນິດ ຫວຽດນາມ ມີກຽດສະຫງ່າໝັ້ນຍືນ*

*ສາທາລະນະລັດສັງຄົມນິຍົມ ຫວຽດນາມ ໝັ້ນຍືນ*

*ປະທານໂຮ່ຈີມິນ ຜູ້ຍິ່ງໃຫຍ່ຢູ່ໃນພາລະກິດຂອງພວກເຮົາຕະຫຼອດໄປ.*